ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

# Annual Report
# ບົດລາຍງານປະຈຳປີ
# 2018



ຄະນະກຳມະການຄຸ້ມຄອງຫຼັກຊັບ
Lao Securities Commission

## ວິໄສທັດຮອດປີ 2030:

“ເປັນຂໍກຸນແຈ ໃນການຈັດສັນແຫຼ່ງທຶນ ທີ່ມີຄວາມໜ້າເຊື່ອຖື ແລະ ມີມາດຕະຖານສາກົນ”

# ສາລະບານ


ຄໍາເຫັນຂອງທ່ານ ຫົວໜ້າສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ (ສຄຄຊ)

ສະຖິຕິ ແລະ ຂໍ້ມູນທີ່ສໍາຄັນກ່ຽວກັບວຽກງານຫຼັກຊັບ ຮອດປີ 2018

I. ການຄຸ້ມຄອງວຽກງານຫຼັກຊັບ ໃນປີ 2018

1. ອົງການຄຸ້ມຄອງວຽກງານຫຼັກຊັບ......1
2. ການຄຸ້ມຄອງຕະຫຼາດຫຼັກຊັບ......2
3. ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ......3
4. ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ......3
5. ນິຕິກໍາທີ່ນໍາໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ......3
6. ການປົກປ້ອງຜູ້ລົງທຶນ......4
7. ການຄຸ້ມຄອງບໍລິຫານ (Corporate Governance)......4

II. ການພັດທະນາຕະຫຼາດທຶນລາວ ໃນປີ 2018

1. ຕະຫຼາດຂັ້ນໜຶ່ງ......4
2. ຕະຫຼາດຂັ້ນສອງ......5
3. ການໃຫ້ຄວາມຮູ້ແກ່ມວນຊົນ......6
4. ການພົວພັນສາກົນ ແລະ ກໍ່ສ້າງບຸກຄະລາກອນ......9

III. ທິດທາງແຜນການຄຸ້ມຄອງ ແລະ ພັດທະນາ ວຽກງານຫຼັກຊັບ ໃນປີ 2019

1. ການຄຸ້ມຄອງຕະຫຼາດຫຼັກຊັບ......10
2. ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ......10
3. ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ......11
4. ການສ້າງ ແລະ ປັບປຸງນິຕິກໍາ......11
5. ການໃຫ້ຄວາມຮູ້ແກ່ມວນຊົນ......11
6. ການຮ່ວມມືສາກົນ ແລະ ການກໍ່ສ້າງບຸກຄະລາກອນ...... 11

ເອກະສານຊ້ອນທ້າຍ

# ຄຳເຫັນຂອງທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)



ໃນໄລຍະ 1 ປີຜ່ານມາ ສັງເກດເຫັນວ່າ ສະພາບລວມຂອງໂລກໄດ້ຜັນແປຢ່າງສັບສົນ ເຊັ່ນ: ຂໍ້ຂັດແຍ່ງການຄ້າ, ໄພທຳມະຊາດ ແລະ ບັນຫາອື່ນໆ ເຊິ່ງມີທັງກາລະໂອກາດ ແລະ ສິ່ງທ້າທາຍຕໍ່ການພັດທະນາເສດຖະກິດ-ສັງຄົມ ເວົ້າລວມ, ເວົ້າສະເພາະ ກໍ່ແມ່ນການພັດທະນາຕະຫຼາດທຶນ. ໂດຍລວມແລ້ວໃນປີ 2018 ສັງເກດເຫັນວ່າ ການພັດທະນາຕະຫຼາດທຶນຢູ່ ສປປ ລາວ ໄດ້ຮັບການພັດທະນາດ້ວຍບາດກ້າວທີ່ໜັກແໜ້ນ ເຖິງວ່າຈະມີຈັງຫວະທີ່ຊ້າເມື່ອທຽບກັບການພັດທະນາຂອງສະຖາບັນການເງິນອື່ນ.

ເພື່ອສືບຕໍ່ຜັນຂະຫຍາຍແຜນຍຸດທະສາດການພັດທະນາຕະຫຼາດທຶນ (2016-2025) ໃຫ້ມີຜົນສຳເລັດ ແລະ ໄດ້ຮັບປະສິດທິຜົນຕາມຄາດໝາຍ, ໃນປີ 2018 ສຄຄຊ ໄດ້ຊຸກຍູ້ສົ່ງເສີມໃຫ້ວິສາຫະກິດທັງພາກລັດ ແລະ ເອກະຊົນ ທີ່ມີເງື່ອນໄຂລະດົມທຶນຜ່ານຕະຫຼາດທຶນ, ສ້າງໂອກາດໃຫ້ບໍລິສັດໃນ ສປປ ລາວ ສາມາດໄປລະດົມທຶນຢູ່ຕ່າງປະເທດ, ສ້າງສິ່ງອຳນວຍຄວາມສະດວກໃຫ້ຜູ້ລົງທຶນໃນການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ ໂດຍການຄົ້ນຄວ້າຂະຫຍາຍເວລາການຊື້-ຂາຍ ແລະ ພັດທະນາຜະລິດຕະພັນໃໝ່ໃນຕະຫຼາດທຶນ ໃຫ້ມີຄວາມຫຼາກຫຼາຍ. ອັນພົ້ນເດັ່ນ, ໄດ້ສຳເລັດການສ້າງນິຕິກຳໃຕ້ກົດໝາຍວ່າດ້ວຍຫຼັກຊັບ ຈຳນວນ 9 ສະບັບ, ສົມທົບກັບພາກສ່ວນກ່ຽວຂ້ອງສ້າງກົນໄກເພື່ອນຳເອົາພັນທະບັດລັດຖະບານ ຊື້-ຂາຍ ຜ່ານ ຕລຊລ, ອະນຸຍາດໃຫ້ 2 ບໍລິສັດລະດົມທຶນຜ່ານ ຕລຊລ ເຊິ່ງສາມາດລະດົມທຶນໄດ້ທັງໝົດ 39,6 ຕື້ກີບ ແລະ ຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ປະເທດ ໄທ ໃຫ້ແກ່ 2 ບໍລິສັດ ເຊິ່ງສາມາດລະດົມທຶນໄດ້ທັງໝົດ 4.331,70 ຕື້ກີບ. ມາຮອດປີ 2018 ຍອດລະດົມທຶນທັງໝົດ ແມ່ນກວມເອົາ 10,83% ຂອງ GDP 2018(P) *(ອ້າງອີງຈາກບົດລາຍງານເສດຖະກິດ ປີ 2018 ຂອງ ທຫລ, ໜ້າ 21)*, ມີສະຖາບັນສື່ກາງດ້ານຫຼັກຊັບ ທັງໝົດ ຈານວນ 15 ແຫ່ງ (ບໍລິສັດຫຼັກຊັບ 4 ແຫ່ງ, ກວດສອບ 4 ແຫ່ງ, ທະນາຄານດູແລຊັບສິນ 3 ແຫ່ງ, ບໍລິສັດປະເມີນມູນຄ່າຊັບສິນ 3 ແຫ່ງ ແລະ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື 1 ແຫ່ງ). ຕິດພັນກັບການຄຸ້ມຄອງຕະຫຼາດຫຼັກຊັບ ແມ່ນໄດ້ເອົາໃຈໃສ່ຕິດຕາມການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວຢ່າງໃກ້ຊິດ ແລະ ຮັບຮອງເອົາລະບຽບການທີ່ສຳຄັນຂອງຕະຫຼາດຫຼັກຊັບລາວ ຈຳນວນ 4 ສະບັບ. ຄຽງຄູ່ກັນນີ້, ສຄຄຊ ກໍ່ໄດ້ເອົາໃຈໃສ່ວຽກງານຝຶກອົບຮົມ ແລະ ໂຄສະນາເຜີຍແຜ່ໃຫ້ມວນຊົນຮັບຮູ້ກ່ຽວກັບວຽກງານຫຼັກຊັບ ໂດຍໄດ້ຈັດສຳມະນາເຜີຍແຜ່ ຈຳນວນ 20 ຄັ້ງ ມີຜູ້ເຂົ້າຮ່ວມທັງໝົດ 2.178 ເທື່ອຄົນ ແລະ ໂຄສະນາຜ່ານສື່ຕ່າງໆ ເປັນຕົ້ນແມ່ນ: ລາຍການໂທລະພາບ "ເສັ້ນທາງສູ່ຕະຫຼາດທຶນລາວ", ໜັງສືພິມ, ເວັບໄຊທ໌ ແລະ ຜ່ານສື່ອື່ນໆຢ່າງເປັນປົກກະຕິ. ນອກນັ້ນ, ສຄຄຊ ກໍ່ໄດ້ສືບຕໍ່ສ້າງສາຍພົວພັນຮ່ວມມືກັບ ຄຄຊ ປະເທດໃກ້ຄຽງ ເປັນຕົ້ນແມ່ນ ກລຕ ໄທ, ຄຄຊ ສສ.ຫວຽດນາມ, ສປ.ຈີນ ແລະ ສ.ເກົາຫຼີ ແລະ ໄດ້ຍົກສູງພາລະບົດບາດຂອງຕົນໃນເວທີກົນໃຫ້ມີຄວາມພົ້ນເດັ່ນຂຶ້ນ ແລະ ໄດ້ຖືກຮັບເຂົ້າເປັນສະມາຊິກສຳຮອງຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO). ເຖິງຢ່າງໃດກໍ່ຕາມ, ວຽກຕະຫຼາດທຶນກໍ່ມີຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍ ເພາະຕ້ອງອາໃສຄວາມຮູ້ຄວາມເຂົ້າໃຈຈາກມວນຊົນ, ຜູ້ລົງທຶນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ, ພ້ອມນີ້ ຜູ້ຄຸ້ມຄອງ ກໍ່ຕ້ອງມີເຄື່ອງມື ແລະ ກົນໄກການຄຸ້ມຄອງທີ່ຮັດກຸມ ເພື່ອສ້າງໃຫ້ຕະຫຼາດທຶນມີປະສິດທິພາບ, ມີຄວາມໜ້າເຊື່ອຖື ແລະ ຮັບປະກັນຜົນປະໂຫຍດສູງສຸດຂອງຜູ້ມີສ່ວນກ່ຽວຂ້ອງໃນຕະຫຼາດທຶນທັງໝົດ.

ສຳລັບທິດທາງແຜນການປີ 2019 ສຄຄຊ ຈະໄດ້ຍົກສູງບົດບາດການຄຸ້ມຄອງມະຫາພາກດ້ານວຽກງານຫຼັກຊັບໃຫ້ມີຈຸດສຸມກວ່າເກົ່າ ດ້ວຍການສ້າງ ແລະ ປັບປຸງບັນດານິຕິກຳເພື່ອຮັບປະກັນການຄຸ້ມຄອງບັນດາບໍລິສັດຈົດ

ທະບຽນ, ສະຖາບັນສື່ກາງດ້ານຫຼັກຊັບ ແລະ ບັນດາກອງທຶນຕ່າງໆ ພ້ອມທັງຊຸກຍູ້ໃຫ້ບັນດາບໍລິສັດທີ່ມີເງື່ອນໄຂເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວໃຫ້ຫຼາຍຂຶ້ນ, ເພີ່ມທະວີການເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຫຼັກຊັບໃຫ້ແກ່ສັງຄົມດ້ວຍຫຼາຍຮູບການ, ສ້າງສາຍພົວພັນຢ່າງໜັກແໜ້ນກັບບັນດາອົງການຈັດຕັ້ງສາກົນ ແລະ ຄະນະກຳມະການຄຸ້ມຄອງຫຼັກຊັບ ປະເທດຕ່າງໆ ເພື່ອຍາດແຍ່ງການຊ່ວຍເຫຼືອທາງດ້ານວິຊາການ ແລະ ກະກຽມສະໝັກເຂົ້າເປັນສະມາຊິກສົມບູນຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO) ເພື່ອຍົກສູງຖານະບົດບາດວຽກງານຫຼັກຊັບຂອງ ສປປ ລາວ ໃນເວທີສາກົນ.

# ສະຖິຕິ ແລະ ຂໍ້ມູນທີ່ສຳຄັນກ່ຽວກັບວຽກງານຫຼັກຊັບ ຮອດປີ 2018



ສ້າງ ແລະ ປັບປຸງນິຕິກຳໄດ້  58 ສະບັບ ປະກອບມີ: ກົດໝາຍ 1 ສະບັບ, ດຳລັດ 3 ສະບັບ, ຂໍ້ຕົກລົງ 19 ສະບັບ, ລະບຽບ 18 ສະບັບ, ແຈ້ງການ 9 ສະບັບ, ຄຳແນະນຳ 4 ສະບັບ, ບົດແນະນຳ 2 ສະບັບ ແລະ ຄູ່ມື 2 ສະບັບ



ບໍລິສັດຫຼັກຊັບ 4 ແຫ່ງ
ບໍລິສັດກວດສອບບັນຊີ 4 ແຫ່ງ
ບໍລິສັດປະເມີນຊັບສິນ 3 ແຫ່ງ



ທະນາຄານດູແລຊັບສິນ 3 ແຫ່ງ ແລະ ບໍລິສັດຈັດລຳດັບຄວາມໜ້າເຊື່ອຖື 1 ແຫ່ງ



ນັກວິຊາຊີບທຸລະກິດຫຼັກຊັບ ທັງໝົດ 15 ຄົນ, ໃນນັ້ນ ມີທີ່ປຶກສາດ້ານການເງິນ 3 ຄົນ ແລະ ນາຍໜ້າຊື້-ຂາຍຫຼັກຊັບ 12 ຄົນ

ຜູ້ລົງທຶນ 14.036 ຄົນ
ພາຍໃນ 10.933 ຄົນ ຕ່າງປະເທດ 3.103 ຄົນ



ມູນຄ່າການຊື້-ຂາຍ ໝົດປີ 2018 ແມ່ນ 90,17 ຕື້ກີບ
ຈຳນວນຮຸ້ນທີ່ສາມາດຈັບຄູ່ຊື້-ຂາຍໄດ້ທັງໝົດ 19,13 ລ້ານຮຸ້ນ
ດັດຊະນີຫຼັກຊັບປີ 2018 ປິດຢູ່ທີ່ 836,45 ຈຸດ
ມູນຄ່າຕະຫຼາດແມ່ນ 9.870 ຕື້ກີບ



ປີ 2018 ມີບໍລິສັດເຂົ້າຈົດທະບຽນ 3 ແຫ່ງ ແລະ ຈຳນວນຮຸ້ນ IPO ມີ 44,19 ລ້ານຮຸ້ນ. ມີການລະດົມທຶນທັງພາຍໃນ ແລະ ຕ່າງປະເທດ ໄດ້ທັງໝົດ 4.400,10 ຕື້ກີບ.  ຮອດປັດຈຸບັນ ວິສາຫະກິດຂອງລັດ ແລະ ເອກະຊົນ ສາມາດລະດົມທຶນຜ່ານຊ່ອງທາງຕະຫຼາດທຶນທັງໝົດ 10,502,14 ຕື້ກີບ ກວມເອົາ 10,83% ຂອງ GDP. (ປະຈຸບັນມີບໍລິສັດຈົດທະບຽນທັງໝົດ 9 ບໍລິສັດ)

## I. ການຄຸ້ມຄອງວຽກງານຫຼັກຊັບ ໃນປີ 2018

### 1. ອົງການຄຸ້ມຄອງວຽກງານຫຼັກຊັບ

### 1.1. ຄະນະກຳມະການຄຸ້ມຄອງຫຼັກຊັບ (ຄຄຊ)

ເພື່ອຄຸ້ມຄອງການເຄື່ອນໄຫວວຽກງານຫຼັກຊັບໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ຄຄຊ ໄດ້ມີການປຶກສາຫາລື, ພິຈາລະນາ ແລະ ຕິດຕາມ ການເຄື່ອນໄຫວແຕ່ລະໜ້າວຽກກ່ຽວຂ້ອງຢ່າງໃກ້ຊິດ ໂດຍຜ່ານການພິຈາລະນາທາງດ້ານເອກະສານ ແລະ ຜ່ານການຈັດກອງປະຊຸມ ຄຄຊ ຈຳນວນ 3 ຄັ້ງ ເພື່ອພິຈາລະນາຮັບຮອງເອົາບັນຫາສຳຄັນຈຳນວນໜຶ່ງ ເປັນຕົ້ນແມ່ນ ຂໍ້ຕົກລົງຂອງ ຄຄຊ, ການອອກຈາໜ່າຍຮຸ້ນໃຫ້ແກ່ມວນຊົນ, ການສະໝັກເຂົ້າເປັນສະມາຊິກຂອງອົງການຄຸ້ມຄອງວຽກງານຫຼັກຊັບສາກົນ (IOSCO), ການຫຼຸດສັດສ່ວນການຖືຄອງຮຸ້ນຂອງລັດຖະບານໃນທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ການນຳເອົາພັນທະບັດລັດຖະບານ ເພື່ອຊື້-ຂາຍຜ່ານ ຕລຊລ ແລະ ບັນຫາສຳຄັນອື່ນໆ. ພ້ອມນີ້, ກໍໄດ້ມີການປັບປຸງລາຍຊື່ຄະນະກຳມະການ ຄຄຊ ຄົນໃໝ່ຈຳນວນ 1 ທ່ານ. ປະຈຸບັນ ໂຄງປະກອບດ້ານບຸກຄະລາກອນຂອງ ຄຄຊ ປະກອບດ້ວຍ 13 ທ່ານ (ແຜນວາດ 1).

**ແຜນວາດ 1 : ໂຄງປະກອບການຈັດຕັ້ງຂອງ ຄະນະກຳມະການຄຸ້ມຄອງຫຼັກຊັບ**



### 1.2. ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ)

ອີງໃສ່ຄວາມຮຽກຮ້ອງຕ້ອງການວຽກງານຕົວຈິງ ສຄຄຊ ໄດ້ມີການປັບປຸງການຈັດຕັ້ງຈຳນວນ 6 ຄັ້ງ, ຊຶ່ງປະຈຸບັນ ສຄຄຊ ມີພະນັກງານທັງໝົດ 46 ຄົນ, ໃນນັ້ນ ປະກອບດ້ວຍ ຄະນະ ສຄຄຊ 03 ຄົນ, ຄະນະພະແນກ 08 ຄົນ ແລະ ວິຊາການ 35 ຄົນ. ປະຈຸບັນ ໂຄງປະກອບດ້ານກົງຈັກຂອງ ສຄຄຊ ປະກອບດ້ວຍ 6 ພະແນກ (ແຜນວາດ 2)

ແຜນວາດ 2: ໂຄງປະກອບດ້ານກົງຈັກຂອງ ສຄຄຊ




## 2. ການຄຸ້ມຄອງຕະຫຼາດຫຼັກຊັບ

ຕະຫຼາດຫຼັກຊັບ ແມ່ນສູນກາງໃນການແລກປ່ຽນຊື້-ຂາຍຫຼັກຊັບຈົດທະບຽນ ແລະ ບໍ່ຈົດທະບຽນທີ່ຜູ້ລົງທຶນຖືຄອງ. ເພື່ອຮັບປະກັນການຊື້-ຂາຍໃຫ້ມີຄວາມຍຸຕິທຳ ແລະ ຕະຫຼາດຫຼັກຊັບ ມີການເຄື່ອນໄຫວຢ່າງມີປະສິດທິພາບ ແລະ ໄດ້ຮັບການພັດທະນາຢ່າງຕໍ່ເນື່ອງ, ສຄຄຊ ຈຶ່ງໄດ້ເອົາໃຈໃສ່ຕິດຕາມການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວຢ່າງໃກ້ຊິດ ດ້ວຍການກວດກາຕາມເອກະສານປະຈຳເດືອນ, ໄຕມາດ, ຫົກເດືອນ ແລະ ປີ ຢ່າງເປັນປົກກະຕິ ແລະ ລົງກວດກາກັບທີ່ ຈຳນວນ 1 ຄັ້ງ. ຜ່ານການກວດກາ ເຫັນວ່າ ຕະຫຼາດຫຼັກຊັບລາວການເຄື່ອນໄຫວໂດຍລວມແມ່ນສອດຄ່ອງຕາມການກຳນົດຂອງລະບຽບກົດໝາຍ. ພ້ອມກັນນີ້, ກໍ່ໄດ້ຮັບຮອງເອົາລະບຽບຂອງຕະຫຼາດຫຼັກຊັບລາວ ຈຳນວນ 4 ສະບັບ.

ສຄຄຊ ໄດ້ເອົາໃຈໃສ່ຕິດຕາມການເຄື່ອນໄຫວຊື້-ຂາຍຮຸ້ນ ຢູ່ຕະຫຼາດຫຼັກຊັບລາວ ຢ່າງໃກ້ຊິດ. ໃນ 1 ປີ ຜ່ານມາ ການເຄື່ອນໄຫວຊື້-ຂາຍຮຸ້ນ ຢູ່ຕະຫຼາດຫຼັກຊັບລາວ ມີດັ່ງນີ້:

ໃນທ້າຍປີ 2018 ດັດຊະນີຕະຫຼາດຫຼັກຊັບລາວ ປິດຢູ່ 823,65 ຈຸດ ຫຼຸດລົງ −16,42% ທຽບໃສ່ ທ້າຍປີ 2017 ໂດຍມີມູນຄ່າການຊື້−ຂາຍ ທັງໝົດ 92,68 ຕື້ກີບ ຫຼຸດລົງ −73,04% ທຽບໃສ່ປີ 2017 ຊຶ່ງໃນນັ້ນເປັນການຊື້−ຂາຍຮຸ້ນຂອງຜູ້ລົງທຶນຕ່າງປະເທດ ກວມເອົາ 51,67%. ສາເຫດທີ່ດັດຊະນີຕະຫຼາດຫຼັກຊັບປັບຕົວຫຼຸດລົງເມື່ອທຽບກັບປີຜ່ານມາ ແມ່ນມາຈາກ ການປັບຕົວຫຼຸດລົງ ຂອງລາຄາຮຸ້ນຂອງຫຼາຍບໍລິສັດ ເປັນຕົ້ນແມ່ນ ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (EDL−GEN) ປັບຕົວຫຼຸດລົງ −17,71%, ຮຸ້ນບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ (PTL) ປັບຕົວຫຼຸດລົງ −34,78%, ຮຸ້ນບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ປັບຕົວຫຼຸດລົງ −38,98% ແລະ ຮຸ້ນບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ (PCD) ປັບຕົວຫຼຸດລົງ −27,27% ໂດຍສາເຫດຂອງການປັບຕົວຫຼຸດລົງ ຂອງບັນດາລາຄາ ຮຸ້ນດັ່ງກ່າວ ແມ່ນເກີດຈາກພາວະການຊື້−ຂາຍທີ່ຊົບເຊົາລົງຂອງຕະຫຼາດຫຼັກຊັບລາວ ເມື່ອທຽບກັບປີຜ່ານມາ ໂດຍອາດມີປັດໃຈມາຈາກຜົນການດຳເນີນທຸລະກິດຂອງບໍລິສັດຈົດທະບຽນ ຍັງບໍ່ດຶງດູດ ແລະ ສ້າງຄວາມເຊື່ອໝັ້ນໃຫ້ແກ່ຜູ້ລົງທຶນໃນການຕັດສິນໃຈຊື້−ຂາຍຮຸ້ນ ເຖິງວ່າໃນປີນີ້ຈະມີບໍລິສັດຈົດ

ທະບຽນໃໝ່ເພີ່ມ 3 ແຫ່ງ ຄື: ບໍລິສັດ ຊີມັງລາວ ມະຫາຊົນ (LCC), ບໍລິສັດ ມະຫາທຶນ ເຊົ່າສິນເຊື່ອ ມະຫາຊົນ (MHTL) ແລະ ບໍລິສັດ ລາວອາໂກເທັກ ມະຫາຊົນ (LAT) ກໍ່ຕາມ.

## 3. ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ

ສະຖາບັນບັນສື່ກາງດ້ານຫຼັກຊັບ ເປັນໜຶ່ງໃນຕົວກາງໃນການຂັບເຄື່ອນຕະຫຼາດທຶນໃຫ້ມີການພັດທະນາ, ສຄຄຊ ໄດ້ເອົາໃຈໃສ່ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງສະຖາບັນສື່ກາງຢ່າງເປັນປົກກະຕິ ດ້ວຍຮູບແບບການກວດກາທາງເອກະສານ ແລະ ກວດກາກັບທີ່ ຊຶ່ງໃນປີດັ່ງກ່າວ. ພ້ອມດຽວກັນນີ້, ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໄດ້ມີການຄົ້ນຄວ້າ ແລະ ພິຈາລະນາຮັບຮອງເອົາ 02 ທະນາຄານ ທີ່ເປັນສາຂາທະນາຄານຕ່າງປະເທດ ຢູ່ ສປປ ລາວ ເປັນທະນາຄານດູແລຊັບສິນ ຄື ທະນາ ຄານ ອຸດສາຫະກໍາ-ການຄ້າ ແຫ່ງ ສປ ຈີນ ສາຂານະຄອນຫຼວງວຽງຈັນ (Industrial and Commercial Bank of China Vientiane) ແລະ ທະນາຄານ ແຫ່ງປະເທດຈີນ ຈໍາກັດ ສາຂານະຄອນຫຼວງ ວຽງຈັນ (Bank of China Vientiane) ຫຼື ເວົ້າໄດ້ວ່າໃນປະຈຸບັນທະນາຄານດູແລຊັບສິນໃນ ສປປ ລາວ ທີ່ໃຫ້ບໍລິການດ້ານວຽກງານຫຼັກຊັບ ຢູ່ ສປປ ລາວ ແມ່ນເປັນສາຂາທະຄານຕ່າງປະເທດທັງໝົດ.

ປະຈຸບັນ ສະຖາບັນສື່ກາງດ້ານຫຼັກຊັບທີ່ໃຫ້ບໍລິການວຽກງານຫຼັກຊັບ ທີ່ຖືກຮັບຮອງໂດຍ ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ມີ ບໍລິສັດຫຼັກຊັບ ທັງໝົດ 4 ແຫ່ງ, ບໍລິສັດກວດສອບ 4 ແຫ່ງ, ບໍລິສັດຈັດອັນດັບຄວາມໜ້າເຊື່ອຖື 1 ແຫ່ງ, ບໍລິສັດປະເມີນມູນຄ່າຊັບສິນ 3 ແຫ່ງ, ທະນາຄານດູແລຊັບສິນ 3 ແຫ່ງ ແລະ ນັກວິຊາຊີບທຸລະກິດຫຼັກຊັບທັງໝົດມີ 15 ຄົນ.

## 4. ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

### 1.1. ການລາຍງານ ແລະ ເປີດເຜີຍຂໍ້ມູນ.

ໃນປີ 2018, ສຄຄຊ ໄດ້ປັບປຸງຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ ຊຶ່ງໄດ້ເນັ້ນໜັກໃສ່ບາງບັນຫາສໍາຄັນ ເຊັ່ນ: ຮູບແບບການລາຍງານປົກກະຕິ, ຮູບແບບການລາຍງານກະທັນຫັນ, ການລາຍງານປະຈໍາປີ ແລະ ອື່ນໆ ແນໃສ່ເພີ່ມທະວີຄວາມຮັບຜິດຊອບຂອງບໍລິສັດຈົດທະບຽນ ຕໍ່ການເປີດເຜີຍຂໍ້ມູນ ແລະ ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນໃນການເຂົ້າເຖິງຂໍ້ມູນໃຫ້ຫຼາຍຂຶ້ນກວ່າເກົ່າ. ພ້ອມດຽວກັນນີ້, ສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ ໄດ້ຕິດຕາມການລາຍງານ ແລະ ເປີດເຜີຍຂໍ້ມູນຂອງບໍລິສັດຈົດທະບຽນ ເປັນຕົ້ນ ບົດລາຍງານການດໍາເນີນທຸລະກິດ ແລະ ເອກະສານລາຍງານການເງິນ, ການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນ, ການຈ່າຍເງິນປັນຜົນ, ການນໍາໃຊ້ທຶນທີ່ລະດົມໄດ້ ແລະ ອື່ນໆ ຢ່າງເປັນປົກກະຕິ.

### 1.2. ການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS)

ໃນປີ 2018, ສຄຄຊ ສົມທົບກັບກະຊວງການເງິນ ແລະ ພາກສ່ວນທີ່ກ່ຽວຂ້ອງ ໄດ້ສໍາເລັດການສ້າງບົດວິເຄາະຊ່ອງຫວ່າງ (Gap Analysis Report) ການຈັດຕັ້ງປະຕິບັດມາດຕະຖານສາກົນດ້ານການລາຍງານການເງິນ (IFRS) ຂອງ ສປປ ລາວ ເພື່ອຊອກຫາຊ່ອງຫວ່າງ, ສິ່ງທ້າທາຍ ແລະ ກໍານົດແຜນຂ້າມຜ່ານສູ່ການຈັດຕັ້ງປະຕິບັດ IFRS ທີ່ແທດເໝາະກັບແຕ່ລະຂະແໜງການ ຕາມກອບເວລາທີ່ເໝາະສົມ.

## 5. ນິຕິກໍາທີ່ນໍາໃຊ້ເຂົ້າໃນການຄຸ້ມຄອງວຽກງານຫຼັກຊັບ

ສຄຄຊ ໄດ້ສ້າງ ແລະ ປັບປຸງ ນິຕິກໍາປື້ນອ້ອມວຽກງານຫຼັກຊັບ ເພື່ອໃຫ້ການເຄື່ອນໄຫວວຽກງານດັ່ງກ່າວມີຄວາມສະຫງົບ, ເປັນລະບຽບຮຽບຮ້ອຍ, ສອດຄ່ອງຕາມແຜນແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດຖະບານໃນແຕ່ລະໄລຍະ. ສຄຄຊ ໄດ້ຄົ້ນຄວ້າປັບປຸງ ກົດໝາຍ

ວ່າດ້ວຍຫຼັກຊັບ ແລະ ສຳເລັດການສ້າງ ແລະ ປັບປຸງນິຕິກຳຈຳນວນ 9 ສະບັບ (ລາຍລະອຽດໃນເອກະສານຊ້ອນທ້າຍ). ຮອດປະຈຸບັນ ມີນິຕິກຳທີ່ໄດ້ຮັບການສ້າງ ແລະ ປັບປຸງທັງໝົດ 58 ສະບັບ (ລາຍລະອຽດສາມາດເບິ່ງໄດ້ທີ່ເວບ ໄຊທ໌ www.lsc.gov.la).

## 6. ການປົກປ້ອງຜູ້ລົງທຶນ

ເພື່ອເປັນການປົກປ້ອງຜູ້ລົງທຶນ, ສຄຄຊ ໄດ້ສ້າງຊ່ອງທາງໃນການຮ້ອງຟ້ອງ ຫຼື ແຈ້ງຄວາມຈາກສັງຄົມ ກໍລະນີຫາກພົບເຫັນ ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດລະບຽບກົດໝາຍ ໃນຂົງເຂດວຽກງານຫຼັກຊັບ ຫຼື ສົງໄສວ່າ ບຸກຄົນ ຫຼື ນິຕິບຸກຄົນ ຫາກມີການເຄື່ອນໄຫວທີ່ອາດເປັນການລະເມີດລະບຽບກົດໝາຍ ຢູ່ໃນຂອງເຂດວຽກງານຫຼັກຊັບ ສາມາດຮ້ອງຟ້ອງ ຫຼື ແຈ້ງຄວາມ ມາຍັງ ສຄຄຊ ໂດຍຜ່ານ 4 ຊ່ອງທາງ ຄື: 1). ສາມາດເຂົ້າມາໃຫ້ຂໍ້ມູນດ້ວຍຕົນເອງ, 2). ສົ່ງຂໍ້ມູນຜ່ານທາງໄປສະນີ, 3). ໂທລະສັບສາຍດ່ວນ, ແລະ 4.) ຜ່ານທາງອີເມວ ທີ່ເວັບໄຊທ໌ຂອງ ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ.

## 7. ການຄຸ້ມຄອງບໍລິຫານ (Corporate Governance)

ໃນປີ 2018, ສຄຄຊ ໄດ້ປັບປຸງບາງນິຕິກຳທີ່ຕິດພັນກັບວຽກງານຄຸ້ມຄອງບໍລິຫານ (CG) ເປັນຕົ້ນ ຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ເປີດເຜີຍຂໍ້ມູນ, ຄຳແນະນຳວ່າດ້ວຍການຈັດກອງປະຊຸມຜູ້ຖືຮຸ້ນຂອງບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ອື່ນໆ.

ນອກຈາກນັ້ນ, ສຄຄຊ ສົມທົບກັບ ອົງການການເງິນສາກົນ (IFC) ຄົ້ນຄວ້າ ແລະ ຮ່າງຄຳແນະນຳກ່ຽວກັບການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນ (CG guideline) ຈຸດປະສົງແມ່ນເພື່ອຍົກລະດັບມາດຕະຖານການຄຸ້ມຄອງບໍລິຫານສຳລັບບໍລິສັດຈົດທະບຽນໃນຕະຫຼາດຫຼັກຊັບຢູ່ ສປປ ລາວ ໃຫ້ສອດຄ່ອງກັບມາດຕະຖານຂອງບັນດາປະເທດໃນພາກພື້ນ ແລະ ສາກົນ ໂດຍອີງໃສ່ ຫຼັກການການຄຸ້ມຄອງບໍລິຫານຂອງ G20/OECD ແລະ ບັດປະເມີນການຄຸ້ມຄອງບໍລິຫານຂອງສະມາຄົມບັນດາປະເທດອາຊີຕະເວັນອອກສຽງໃຕ້ (ASEAN CG Scorecard). ຄຳແນະນຳດັ່ງກ່າວ ຕົ້ນຕໍແມ່ນກຳນົດແນວທາງໃນການຈັດຕັ້ງປະຕິບັດ ສຳລັບ ຜູ້ຖືຮຸ້ນ, ສະພາບໍລິຫານ, ຄະນະອຳນວຍການ ແລະ ຫົວໜ້າໜ່ວຍງານຕ່າງໆ ຂອງບໍລິສັດຈົດທະບຽນ ໃຫ້ເຄື່ອນວຽກງານໃຫ້ມີປະສິດທິພາບ, ເປັນລະບຽບຮຽບຮ້ອຍ, ໂປ່ງໃສ ແລະ ຍຸຕິທຳ ພ້ອມທັງຍົກສູງການປະຕິບັດໜ້າທີ່ຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນດ້ວຍຄວາມຮັບຜິດຊອບສູງ ແລະ ສັດຊື່ບໍລິສຸດ.

# II. ການພັດທະນາຕະຫຼາດທຶນລາວ ໃນປີ 2018

## 1. ຕະຫຼາດຂັ້ນໜຶ່ງ

ໃນປີ 2018, ສຄຄຊ ໄດ້ອະນຸຍາດໃຫ້ 3 ບໍລິສັດ ລະດົມທຶນຜ່ານຕະຫຼາດຫຼັກຊັບລາວ, ຊຶ່ງສາມາດລະດົມທຶນໄດ້ທັງໝົດ 68,4 ຕື້ກີບ. ພ້ອມທັງ ໄດ້ຮັບຮູ້ການອອກຈຳໜ່າຍຮຸ້ນກູ້ຢູ່ປະເທດໄທ ໃຫ້ແກ່ 2 ບໍລິສັດ ຊຶ່ງສາມາດລະດົມທຶນໄດ້ທັງໝົດ 4.331,70 ຕື້ກີບ, ລວມມູນຄ່າການລະດົມທຶນທັງໝົດ 4.400,10 ຕື້ກີບ. (ລາຍລະອຽດຕາຕະລາງຊ້ອຍທ້າຍ 2). ຮອດປັດຈຸບັນ ວິສາຫະກິດຂອງລັດ ແລະ ເອກະຊົນ ສາມາດລະດົມທຶນຜ່ານຊ່ອງທາງຕະຫຼາດທຶນທັງໝົດ 10,502,14 ຕື້ກີບ ກວມເອົາ 10,83% ຂອງ GDP. ເຖິງວ່າ ສັດສ່ວນການລະດົມທຶນຜ່ານຕະຫຼາດທຶນ ຍັງຕ່ຳເມື່ອທຽບກັບຂະແໜງການທະນາຄານ ແລະ ສະຖາບັນການເງິນອື່ນ ແຕ່ຈັ່ງຫວະການຂະຫຍາຍຕົວຂອງຕະຫຼາດຫຼັກຊັບລາວ ເຫັນວ່າ ມີບາດກ້າວທີ່ດີຂຶ້ນ.




ພາບບັນຍາກາດພິທີການເປີດ ຊື້–ຂາຍຮຸ້ນມື້ທຳອິດ ຂອງ ບໍລິສັດ ຊີມັງລາວ ມະຫາຊົນ, ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ແລະ ບໍລິສັດ ລາວອາໂກຣເທັກ ມະຫາຊົນ

ພ້ອມດຽວກັນນີ້, ສຄຄຊ ຍັງໄດ້ປັບປຸງລະບຽບວ່າດ້ວຍການອອກຈໍາໜ່າຍຮຸ້ນ ໂດຍໄດ້ເນັ້ນໜັກໃສ່ຫຼາຍດ້ານທີ່ສໍາຄັນ ເປັນຕົ້ນ ເງື່ອນໄຂການອອກຈໍາໜ່າຍຮຸ້ນ, ການເປີດເຜີຍຂໍ້ມູນໃນໜັງສືຊວນຊື້, ຂັ້ນຕອນການອອກຈໍາໜ່າຍ, ການລາຍງານກ່ຽວກັບການນໍາໃຊ້ທຶນທີ່ລະດົມໄດ້, ການຂາຍຮຸ້ນເດີມພ້ອມກັບການອອກຈໍາ ໜ່າຍຮຸ້ນເພີ່ມທຶນໃຫ້ແກ່ມວນຊົນ ແລະ ອື່ນໆ ເພື່ອແນໃສ່ເພີ່ມທະວີຄວາມໂປ່ງໃສ, ຍົກສູງຄວາມຮັບຜິດຊອບຂອງທີ່ປຶກສາດ້ານຕ່າງໆ, ປົກປ້ອງສິດ ແລະ ຜົນປະໂຫຍດຂອງຜູ້ລົງທຶນ ແລະ ເພີ່ມປະສິດຕິພາບວຽກງານການອອກຈໍາໜ່າຍຮຸ້ນ ໃຫ້ສູງຂຶ້ນກວ່າເກົ່າ.

ໃນໄລຍະຜ່ານມາ ລັດຖະບານ ແມ່ນໄດ້ໃຫ້ຄວາມສໍາຄັນຕໍ່ວຽກງານການພັດທະນາຕະຫຼາດທຶນຂອງ ສປປ ລາວ ແລະ ໄດ້ມີນະໂຍບາຍສົ່ງເສີມທີ່ຕິດພັນກັບການອອກຈໍາໜ່າຍຫຼັກຊັບ ເປັນຕົ້ນ ການຫຼຸດອາກອນກໍາໄລ ສໍາລັບຜູ້ອອກຈໍາໜ່າຍຫຼັກຊັບ (ບໍລິສັດ) ໃນອັດຕາ 5% ຈາກອັດຕາປົກກະຕິເປັນເວລາ 4 ປີຕໍ່ເນື່ອງ (ປັດຈຸບັນອັດຕາອາກອນກໍາໄລ 24% ແຕ່ບໍລິສັດຈົດທະບຽນ ໄດ້ເສຍພຽງແຕ່ 19% ເປັນເວລາ 4 ປີ ພາຍຫຼັງເຂົ້າຈົດທະບຽນໃນຕະຫຼາດຫຼັກຊັບລາວ). ພ້ອມນັ້ນ, ສໍາລັບຜູ້ລົງທຶນ ແມ່ນໄດ້ຮັບການຍົກເວັ້ນອາກອນກໍາໄລຈາກການຂາຍຮຸ້ນ (Capital gain tax) ແລະ ອາກອນເງິນປັນຜົນ (Dividend tax).

## 2. ຕະຫຼາດຂັ້ນສອງ (ຕະຫຼາດຫຼັກຊັບລາວ)

ເພື່ອເປັນການຊຸກຍູ້ການພັດທະນາຕະຫຼາດທຶນລາວໃຫ້ມີການຂະຫຍາຍຕົວ, ສຄຄຊ ໄດ້ສົມທົບກັບພາກສ່ວນກ່ຽວຂ້ອງ ໄດ້ສໍາເລັດສ້າງກົນໄກເພື່ອນໍາເອົາພັນທະບັດລັດຖະບານຊື້-ຂາຍຜ່ານຕະຫຼາດຫຼັກຊັບ ລາວ. ໃນປີ 2018 ນີ້ ແມ່ນເປັນປີທໍາອິດທີ່ພັນທະບັດລັດຖະບານຖືກນໍາມາຈົດທະບຽນໂດຍກະຊວງການເງິນ ແລະ ທັງເປັນປີທໍາອິດທີ່ກະຊວງການເງິນອອກພັນທະບັດລັດຖະບານ ແລະ ລະດົມທຶນຜ່ານຕະຫຼາດຫຼັກຊັບລາວ ໂດຍ ພັນທະບັດລັດຖະບານທີ່ນໍາມາລະດົມທຶນໃນຄັ້ງນີ້ ແມ່ນເປັນພັນທະບັດລັດຖະບານ ປະເພດ ດຸ່ນດ່ຽງງົບປະມານ ຈໍານວນ 714.870 ໜ່ວຍ, ມູນຄ່າກໍານົດ 1.000.000 ກີບຕໍ່ໜ່ວຍ, ລາຄາຂາຍ 1.000.000 ກີບຕໍ່ໜ່ວຍ, ມູນ ຄ່າລວມ 714.870.000.000 ກີບ ໂດຍແບ່ງຕາມອາຍຸ ດັ່ງລຸ່ມນີ້:

(1) ອາຍຸ 1 ປີ;

(2) ອາຍຸ 3 ປີ;

(3) ອາຍຸ 5 ປີ;

(4) ອາຍຸ 7 ປີ.

ພ້ອມນີ້ ເພື່ອສ້າງເງື່ອນໄຂໃຫ້ວິສາຫະກິດທີ່ມີຂະໜາດນ້ອຍ ແຕ່ມີຜົນການດຳເນີນງານດີ ແລະ ມີທ່າອ່ຽງຂະຫຍາຍຕົວ, ສຄຄຊ ໄດ້ສຶກສາຄົ້ນຄວ້າກະດານຊື້-ຂາຍຮຸ້ນມວນຊົນ (People' s Alternative Market ຫຼື PAM) ຫຼື OTC Board ຊຶ່ງເປັນກະດານຮອງຈາກກະດານຫຼັກ (Main Board) ເພື່ອດຶງດູດໃຫ້ແກ່ການລົງທຶນ ເປັນຕົ້ນແມ່ນ: ການຈົດທະບຽນຄວບ (Dual Listing), ໃບສັນຍາຮັບຝາກຫຼັກຊັບ (Depository Reciept: DR), ກອງທຶນເພື່ອການລົງທຶນ (Collective Investment Scheme), ຮຸ້ນບູລິມະສິດ (Preferred Share), ໃບສະແດງສິດໃນການຈອງຊື້ຮຸ້ນສາມັນ (Warrant) ແລະ ອື່ນໆ.

ພ້ອມກັນນີ້, ກໍ່ໄດ້ອະນຸຍາດໃຫ້ຕະຫຼາດຫຼັກຊັບລາວ ຂະຫຍາຍເວລາການຊື້-ຂາຍຮຸ້ນ ຈາກ 8:30 ໂມງ ຫາ 11:30 ໂມງ ມາເປັນ 8:30 ໂມງ ຫາ 15:00 ໂມງ, ອະນຸຍາດໃຫ້ສາມາດສັ່ງຊື້-ຂາຍຮຸ້ນໂດຍໃຊ້ຄຳສັ່ງຕາມລາຄາຕະຫຼາດ (Market Order), ປັບຂະໜາດຫົວໜ່ວຍລາຄາ (Tick Size), ອະນຸຍາດໃຫ້ມີການຊື້-ຂາຍຮຸ້ນແບບລ໋ອດໃຫຍ່ (Block Trade), ອະນຸຍາດໃຫ້ມີຜູ້ສ້າງສະພາບຄ່ອງ (Market Maker).

## 3. ການໃຫ້ຄວາມຮູ້ແກ່ມວນຊົນ

ເພື່ອເຮັດໃຫ້ມວນຊົນ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ມີຄວາມຮັບຮູ້, ເຂົ້າໃຈ ແລະ ສາມາດມີສ່ວນຮ່ວມໃນການພັດທະນາຕະຫຼາດທຶນໄດ້ຢ່າງຖືກຕ້ອງຕາມລະບຽບການກຳນົດ, ສຄຄຊ ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານຢ່າງຕັ້ງໜ້າ. ໂດຍໄດ້ຮ່ວມກັບພາກສ່ວນຕ່າງໆທັງພາຍໃນ ແລະ ຕ່າງປະເທດ ເປັນຕົ້ນແມ່ນ ຄຄຊ ສສ.ຫວຽດນາມ, ສປ.ຈີນ ແລະ ໄທ ຈັດກອງປະຊຸມໃນຫົວຂໍ້ຕ່າງໆທີ່ຕິດພັນກັບວຽກງານຕະຫຼາດທຶນໃຫ້ແກ່ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ແລະ ພາກສ່ວນກ່ຽວຂ້ອງຈຳນວນຫຼາຍຄັ້ງ.



ສຄຄຊ ຮ່ວມກັບ ຄຄຊ ສປ.ຈີນ ຈັດກອງປະຊຸມສຳມະນາ




ທະນາຄານພັດທະນາອາຊີຮ່ວມກັບສຄຄຊ ຈັດກອງປະຊຸມກ່ຽວກັບຮຸ້ນກູ້

ພ້ອມນັ້ນ, ສຄຄຊ ຍັງໄດ້ຂຽນບົດສະຫຼຸບການຊື້–ຂາຍຮຸ້ນຢູ່ຕະຫຼາດຫຼັກຊັບລາວ ແລະ ຕະຫຼາດຫຼັກຊັບຕ່າງປະເທດ, ຂຽນບົດຄວາມກ່ຽວກັບວຽກງານຕະຫຼາດທຶນ, ບົດຂ່າວຕ່າງໆກ່ຽວກັບການເຄື່ອນໄຫວວຽກງານຂອງ ສຄຄຊ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ ເພື່ອໂຄສະນາເຜີຍແຜ່ໃຫ້ມວນຊົນທົ່ວໄປໄດ້ຮັບຊາບຢ່າງສະໝໍ່າສະເໝີ, ດ້ວຍຫຼາຍຮູບການ ແລະ ຫຼາຍຊ່ອງທາງ ເປັນຕົ້ນແມ່ນ ການເຜີຍແຜ່ຜ່ານພາຫະນະສື່ມວນຊົນປະເພດຕ່າງໆ ເຊັ່ນ: ວາລະສານການທະນາຄານ, ໜັງສືພິມລາວພັດທະນາ ແລະ ໂທລະພາບແຫ່ງຊາດລາວ ຊ່ອງ ທຊລ 1, ເວັບໄຊ໌ທະນາຄານແຫ່ງ ສປປ ລາວ, ເວັບໄຊ໌, Facebook, Youtube ຂອງ ສຄຄຊ ແລະ ຄື້ນວິທະຍຸ 103,7 MHz ລາຍການເພື່ອນທະນາຄານ ຂອງ ທະນາຄານແຫ່ງ ສປປ ລາວ.

ນອກນັ້ນ, ສຄຄຊ ຍັງໄດ້ມີການຈັດກອງປະຊຸມເຜີຍແຜ່ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນໃນຫົວຂໍ້ຕ່າງໆໃຫ້ແກ່ຫຼາຍພາກສ່ວນໃນສັງຄົມ, ໂດຍສະເພາະແມ່ນ ອົງກອນພາກລັດ, ສະຖາບັນການສຶກສາ ແລະ ວິສາຫະກິດ ທັງພາຍໃນນະຄອນຫຼວງວຽງຈັນ ແລະ ຕ່າງແຂວງ, ພ້ອມນັ້ນ ສຄຄຊ ຍັງໄດ້ມີການເຜີຍແຜ່ລະບຽບການກ່ຽວຂ້ອງກັບວຽກງານຕະຫຼາດທຶນໃຫ້ແກ່ບັນດາບໍລິສັດຈົດທະບຽນ ແລະ ນັກວິຊາຊີບທຸລະກິດຫຼັກຊັບ, ຊຶ່ງໃນປີ 2018 ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ໄດ້ຈັດສຳເລັດກອງປະຊຸມໂຄສະນາເຜີຍແຜ່ລະບຽບການ ແລະ ຄວາມຮູ້ກ່ຽວກັບວຽກງານຕະຫຼາດທຶນ ທັງໝົດ 18 ຄັ້ງ, ໃນນັ້ນ ຢູ່ພາຍໃນນະຄອນຫຼວງວຽງຈັນ 14 ຄັ້ງ ແລະ ຕ່າງແຂວງ 4 ຄັ້ງ, ມີຜູ້ເຂົ້າຮ່ວມທັງໝົດ 2.522 ທ່ານ. ນອກນີ້, ສຄຄຊ ຍັງໄດ້ຈັດກອງປະຊຸມທົບທວນລະ ບຽບການກ່ຽວຂ້ອງໃຫ້ແກ່ນັກວິຊາຊີບທຸລະກິດຫຼັກຊັບໃຫ້ແກ່ບັນດາບໍລິສັດຫຼັກຊັບທັງໝົດຈຳນວນ 36 ຄົນ.

ຕາຕະລາງຂໍ້ມູນການລົງເຜີຍແຜ່ກັບທີ່ໃນໄລຍະຜ່ານມາ

| 2014 | | 2015 | | 2016 | | 2017 | | 2018 | |
|---|---|---|---|---|---|---|---|---|---|
| ຈຳນວນ ຄັ້ງ | ຈຳນວນ ຄົນ | ຈຳນວນ ຄັ້ງ | ຈຳນວນ ຄົນ | ຈຳນວນ ຄັ້ງ | ຈຳນວນ ຄົນ | ຈຳນວນ ຄັ້ງ | ຈຳນວນ ຄົນ | ຈຳນວນ ຄັ້ງ | ຈຳນວນ ຄົນ |
| 28 | 2.880 | 24 | 3.944 | 15 | 1.396 | 20 | 2.356 | 18 | 2.522 |

ຜ່ານການໂຄສະນາເຜີຍແຜ່ດັ່ງກ່າວ ເຫັນວ່າ ມວນຊົນ ມີຄວາມຮັບຮູ້ ແລະ ເຂົ້າໃຈກ່ຽວກັບວຽກງານຫຼັກຊັບຫຼາຍຂຶ້ນ.




ພາບບັນຍາກາດການເຄື່ອນໄຫວວຽກງານໂຄສະນາເຜີຍແຜ່ກັບທີ່

ສຄຄຊ ຍັງໄດ້ສືບຕໍ່ເອົາໃຈໃສ່ໃນການຜະລິດລາຍການໂທລະພາບ "ເສັ້ນທາງສູ່ຕະຫຼາດທຶນລາວ" ເພື່ອເປັນອີກຊ່ອງທາງໜຶ່ງໃນການເຜີຍແຜ່ຄວາມຮູ້ ແລະ ການເຄື່ອນໄຫວວຽກງານຂອງຂະແໜງການຕະຫຼາດທຶນໃຫ້ມວນຊົນໄດ້ຮັບຊາບເຖິງບົດບາດຄວາມສຳຄັນຂອງຕະຫຼາດທຶນຕໍ່ການຊຸກຍູ້ໃຫ້ເສດຖະກິດ-ສັງຄົມມີການຂະຫຍາຍຕົວຢ່າງຕໍ່ເນື່ອງ, ຊຶ່ງໄດ້ສຳເລັດການອອກອາກາດ ຈຳນວນ 108 ຄັ້ງ (54 ເທັບ).




ພາບການສຳພາດທ່ານຫົວໜ້າ ສຄຄຊ ແລະ ທ່ານຜູ້ອຳນວຍການທະນາຄານການຄ້າຕ່າງປະເທດລາວມະຫາຊົນ

ພ້ອມນັ້ນ, ສຄຄຊ ຍັງໄດ້ເຂົ້າຮ່ວມການຕັ້ງບູ໊ດ (Booth) ເພື່ອເຜີຍແຜ່ຂໍ້ມູນຂ່າວສານໃນງານເປີດໂລກແຫ່ງການລົງທຶນ ປະຈຳປີ 2018 ທີ່ ຕລຊລ ຈັດຂຶ້ນຈຳນວນ 1 ຄັ້ງ. ນອກນັ້ນ ສຄຄຊ ຍັງໄດ້ຜະລິດ ແລະ ແຈກຢາຍສະຕິກເກີ້ ທີ່ມີເນື້ອໃນແຈ້ງເຖິງຊ່ອງທາງການຕິດຕໍ່ສາຍດ່ວນຂອງ ສຄຄຊ (ສະຕິກເກີ້ສາຍດ່ວນ 1602) ໃຫ້ແກ່ມວນຊົນທົ່ວໄປ ອີກດ້ວຍ.




ຮູບ: ສະຕິກເກີ້ສາຍດ່ວນ 1602

## 4. ການຮ່ວມມືສາກົນ ແລະ ການກໍ່ສ້າງບຸກຄະລາກອນ

### 4.1. ການຮ່ວມມືສາກົນ

ສຄຄຊ ເອົາໃຈໃສ່ຈັດຕັ້ງປະຕິບັດການເຄື່ອນໄຫວວຽກງານຮ່ວມມືສາກົນ ທັງໃນຮູບແບບສອງຝ່າຍ, ຫຼາຍຝ່າຍ ແລະ ອົງການຈັດຕັ້ງສາກົນ ຕາມແນວທາງນະໂຍບາຍຂອງພັກ-ລັດວາງອອກ, ຊຶ່ງໃນປີ 2018 ໄດ້ມີການເລີ່ມສ້າງສາຍພົວພັນຮ່ວມມືສອງຝ່າຍກັບ ຄຄຊ ສປ.ຈີນ, ອົງການຄຸ້ມຄອງວຽກງານການເງິນ ສ.ເກົາຫຼີ ແລະ ໄດ້ເຊັນຂໍ້ຕົກລົງວ່າດ້ວຍການຮ່ວມມືສອງຝ່າຍ ກັບສະຖາບັນ CPA Australia ແລະ ພາຍໃຕ້ໂຄງການດັ່ງກ່າວ ສຄຄຊ ໄດ້ສົ່ງພະນັກງານເຂົ້າຮ່ວມຮຽນຫຼັກສູດ CPA ຈຳນວນ 2 ທ່ານ, ອັນພົ້ນເດັ່ນແມ່ນໄດ້ຮັບຮູ້ເອົາ 3 ຫຼັກສູດຂອງ ສະຖາບັນ CISI ເພື່ອຮອງຮັບການຂະຫຍາຍນັກວິຊາຊີບທຸລະກິດຫຼັກຊັບປະເພດທີ່ປຶກສາທາງດ້ານການເງິນ ແລະ ນັກວິເຄາະ. ພ້ອມນີ້, ກໍ່ໄດ້ສືບຕໍ່ກະກຽມຄວາມພ້ອມໃນການເຊື່ອມໂຍງຕະຫຼາດທຶນລາວກັບຕະຫຼາດທຶນໃນພາກພື້ນ ແລະ ສາກົນ ໃນຂອບຕ່າງໆ ເປັນຕົ້ນແມ່ນ ຂອບ 5 ປະເທດລຸ່ມອ່າງແມ່ນໍ້າຂອງ, ອາຊຽນ ແລະ ອາຊຽນ+3, WTO ແລະ IOSCO ເຮັດໃຫ້ ຄຄຊ ສປປ ລາວ ໄດ້ຖືກຮັບຮອງຈາກອົງການ IOSCO ເປັນສະມາຊິກສຳຮອງ ໃນເດືອນກັນຍາ 2018. ຄຽງຄູ່ກັນນີ້, ເພື່ອຍົກສູງພາລະບົດບາດຂອງ ສຄຄຊ, ສຄຄຊ ໄດ້ເປັນເຈົ້າພາບຈັດກອງປະຊຸມຮ່ວມມືສອງຝ່າຍ ກັບ ຄຄຊ ສສ.ຫວຽດນາມ ຄັ້ງທີ 7 ປະຈຳປີ 2018.




ພາບການເຂົ້າຮ່ວມກອງປະຊຸມຮ່ວມມືດ້ານຕະຫຼາດທຶນໃນຂົງເຂດແມ່ນໍ້າຂອງ



ພາບກອງປະຊຸມປະຈຳປີສອງຝ່າຍລະຫວ່າງ ຄຄຊ ລາວ ແລະ ຄຄຊ ສສ.ຫວຽດນາມ ຢູ່ນະຄອນຫຼວງພະບາງ

### 4.2. ການກໍ່ສ້າງບຸກຄະລາກອນ

ການສົ່ງພະນັກງານໄປຖອດຖອນບົດຮຽນ ແລະ ໄດ້ຮັບທຶນຮອນຈາກພາກພື້ນ ແລະ ສາກົນ ມີບົດບາດສຳຄັນໃນການຊ່ວຍ ສຄຄຊ ພັດທະນາບຸກຄະລາກອນ ທັງດ້ານຜູ້ຄຸ້ມຄອງ ແລະ ຜູ້ມີສ່ວນຮ່ວມໃນຕະຫຼາດທຶນ, ພາຍໃຕ້ການຮ່ວມມືດັ່ງກ່າວ ສຄຄຊ ໄດ້ຈັດສຳມະນາ ແລະ ສົ່ງພະນັກງານລົງຝຶກງານຕົວຈິງ ຈຳນວນ 30 ຄັ້ງ ມີຜູ້ເຂົ້າຮ່ວມ 725 ເທື່ອຄົນ ກວມເອົາ 13 ຫົວຂໍ້ທີ່ຕິດພັນກັບວຽກງານຫຼັກຊັບ ທຽບກັບປີ 2017 ແມ່ນເພີ່ມຂຶ້ນ 2 ເທົ່າຕົວ. ນອກຈາກນີ້, ເພື່ອໃຫ້ການສ້າງນິຕິກຳຂອງ ຄຄຊ ເປັນໄປໃນລວງດຽວກັນກັບພາກພື້ນ ແລະ ສາກົນ ແລະ ທັງເປັນການຮອງຮັບການປະຕິບັດພັນທະກັບສາກົນໃນຕໍ່ໜ້າ, ສຄຄຊ ໄດ້ເຮັດວຽກຮ່ວມກັບຊ່ຽວຊານຈາກ World Bank ແລະ ADB ໃນການຮ່າງກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ແລະ ນິຕິກຳອື່ນໆທີ່ກ່ຽວຂ້ອງ.



ພາບກອງປະຊຸມສຳມະນາໃຫ້ແກ່ຜູ້ມີສ່ວນຮ່ວມໃນຕະຫຼາດທຶນລາວ

## III. ທິດທາງແຜນການຄຸ້ມຄອງ ແລະ ພັດທະນາ ວຽກງານຫຼັກຊັບ ໃນປີ 2019

ເພື່ອເປັນການຈັດຕັ້ງປະຕິບັດ ແຜນຍຸດທະສາດພັດທະນາຕະຫຼາດທຶນ 2016–2025 ແລະ ແຜນການເຄື່ອນໄຫວວຽກງານຂອງ ສຄຄຊ ໃນປີ 2019 ໃຫ້ປະກົດຜົນເປັນຈິງ ສຄຄຊ ຈະສຸມໃສ່ຈັດຕັ້ງປະຕິບັດວຽກບູລິມາສິດດັ່ງນີ້:

### 1. ການຄຸ້ມຄອງຕະຫຼາດຫຼັກຊັບ

ສືບຕໍ່ຕິດຕາມການເຄື່ອນໄຫວຂອງຕະຫຼາດຫຼັກຊັບລາວ ດ້ວຍການກວດກາທາງເອກະສານ ແລະ ລົງກວດກາກັບທີ່, ຕິດຕາມການຊື້-ຂາຍຫຼັກຊັບທີ່ບໍ່ຍຸຕິທຳ ແລະ ລາຍງານຜົນການຊື້-ຂາຍຫຼັກຊັບຢ່າງເປັນປົກກະຕິ, ສືບຕໍ່ຄົ້ນຄວ້າຜະລິດຕະພັນຫຼັກຊັບ ເປັນຕົ້ນແມ່ນ ໃບສະແດງສິດໃນຫຼັກຊັບ (Depository Receipt: DR), ສົມທົບກັບພາກສ່ວນກ່ຽວຂ້ອງສືບຕໍ່ຄົ້ນຄວ້າຊ່ອງທາງເພື່ອສ້າງໂອກາດໃຫ້ວິສາຫະກິດຂະໜາດນ້ອຍ ສາມາດລະດົມແຫຼ່ງທຶນຜ່ານຕະຫຼາດທຶນ (OTC Market), ສົມທົບກັບພາກສ່ວນກ່ຽວຂ້ອງຄົ້ນຄວ້າສ້າງລະບຽບການຄຸ້ມຄອງການສ້າງຕັ້ງກອງທຶນຮ່ວມ (Mutual Fund) ໃຫ້ສຳເລັດໂດຍພື້ນຖານ.

### 2. ການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ

ເພື່ອຍົກສູງແລະສ້າງຄວາມເຂັ້ມແຂງໃຫ້ແກ່ວຽກງານການຄຸ້ມຄອງສະຖາບັນສື່ກາງດ້ານຫຼັກຊັບ ແລະ ສ້າງຄວາມໜ້າເຊື່ອຖືຂອງການໃຫ້ບໍລິການສະຖາບັນສື່ກາງດ້ານນຫຼັກຊັບ ສຳນັກງານ ຄຄຊ ໄດ້ມີແຜນສຶກສາຄົ້ນຄວ້າລະບົບການຄຸ້ມຄອງບໍລິສັດຫຼັກຊັບແບບຕີລາຄາຄວາມສ່ຽງ ( Risk-Base Supervision), ພ້ອມທັງ ຂະຫຍາຍຂອບເຂດການເຄື່ອນໄຫວຂອງບໍລິສັດຫຼັກຊັບ ໃຫ້ສາມາດບໍລິການການຄວບກິດຈະການ (M&A); ຄົ້ນຄວ້າສ້າງເງື່ອນໄຂໃຫ້ມີການເຄື່ອນໄຫວໃຫ້ບໍລິການກອງທຶນເພື່ອການລົງທຶນ, ຊຸກຍູ້ໃຫ້ບໍລິການປະເມີນມູນຄ່າຊັບສິນພາຍໃນ ແລະ ຕ່າງປະເທດ ເຂົ້າມາຂໍຮັບຮອງຈາກ ສຄຄຊ ເພື່ອໃຫ້ບໍລິການປະເມີນມູນຄ່າຊັບສິນໃນຂົງເຂດວຽກງານຫຼັກຊັບໃຫ້ຫຼາຍຂຶ້ນ ແລະ ຄົ້ນຄວ້າເງື່ອນໄຂການຮັບຮອງບໍລິສັດກວດສອບພາຍໃນ ສາມາດໃຫ້ບໍລິການກວດສອບໃນຂົງເຂດວຽກງານຫຼັກຊັບ.

## 3. ການຄຸ້ມຄອງການເຄື່ອນໄຫວຂອງບໍລິສັດອອກຈໍາໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ

ສືບຕໍ່ຊຸກຍູ້, ສົ່ງເສີມ ແລະ ຄົ້ນຄວ້າພິຈາລະນາກະກຽມການອອກຈໍາໜ່າຍຫຼັກຊັບ ຂອງບໍລິສັດ ໃຫ້ສາມາດອອກຈໍາໜ່າຍຫຼັກຊັບ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ, ເອົາໃຈໃສ່ຕິດຕາມການເຄື່ອນໄຫວຂອງບັນດາບໍລິສັດຈົດທະບຽນ ໃຫ້ສອດຄ່ອງຕາມລະບຽບການ ເປັນຕົ້ນແມ່ນ ການລາຍງານ ແລະ ເປີດເຜີຍຂໍ້ມູນ, ການນໍາໃຊ້ທຶນທີ່ລະດົມໄດ້ຈາກການອອກຈໍາໜ່າຍຫຼັກຊັບ, ການຈັດຕັ້ງກອງປະຊຸມຜູ້ຖືຮຸ້ນ ແລະ ການຈ່າຍເງິນປັນຜົນຂອງບໍລິສັດຈົດທະບຽນ,ໃຫ້ສໍາເລັດການຄົ້ນຄວ້າສ້າງ ແລະ ປະກາດນໍາໃຊ້ ຄໍາແນະນໍາກ່ຽວກັບການຄຸ້ມຄອງບໍລິຫານບໍລິສັດສໍາລັບບໍລິສັດຈົດທະບຽນ, ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ ແລະ ຈັດບູລິມະສິດບໍລິສັດເປົ້າໝາຍ ເພື່ອກະກຽມຄວາມພ້ອມຮອບດ້ານໃນການອອກຈໍາໜ່າຍຮຸ້ນ ແລະ ຈົດທະບຽນໃນຕະຫຼາດຫຼັກຊັບ.

## 4. ການສ້າງ ແລະ ປັບປຸງ ນິຕິກໍາ

ສືບຕໍ່ເປັນເສນາທິການໃຫ້ແກ່ ຄຄຊ ເພື່ອປະຕິບັດໜ້າທີ່ ແລະ ຂອບເຂດສິດໃນການ ສ້າງ ແລະ ປັບປຸງ ນິຕິກໍາກ່ຽວກັບວຽກງານຫຼັກຊັບ, ດໍາເນີນການສືບສວນ-ສອບສວນ ແລະ ດໍາເນີນຄະດີກ່ຽວກັບວຽກງານຫຼັກຊັບ.

## 5. ການໃຫ້ຄວາມຮູ້ແກ່ມວນຊົນ

ເພື່ອເປັນການຂະຫຍາຍຕາໜ່າງຄວາມຮູ້-ຄວາມເຂົ້າໃຈກ່ຽວກັບວຽກງານຕະຫຼາດທຶນໃຫ້ທຸກກຸ່ມເປົ້າໝາຍໃນສັງຄົມໄດ້ຮັບຊາບຢ່າງທົ່ວເຖິງ, ສຄຄຊ ຈະສືບຕໍ່ໂຄສະນາເຜີຍແຜ່ຄວາມຮູ້ວຽກງານຕະຫຼາດທຶນດ້ວຍຫຼາຍຊ່ອງທາງ, ຊຶ່ງໃນປີ 2019 ສຄຄຊ ຈະທໍາການຄົ້ນຄ້ວາສ້າງສະປອດໂຄສະນາກ່ຽວກັບວຽກງານຕະຫຼາດທຶນຜ່ານ ຄື້ນວິທະຍຸ ແລະ ລາຍການໂທລະພາບ ອອກເຜີຍແຜ່ສູ່ມວນຊົນ.

## 6. ການຮ່ວມມືສາກົນ ແລະ ການກໍ່ສ້າງບຸກຄະລາກອນ

### 6.1. ການຮ່ວມມືສາກົນ

ເພື່ອສືບຕໍ່ສ້າງສາຍສໍາພັນກັບ ຄຄຊ ຕ່າງປະເທດ ແລະ ສາກົນ ແນໃສ່ການກໍ່ສ້າງບຸກຄະລາກອນໃນຂົງເຂດຫຼັກຊັບ, ສຄຄຊ ສືບຕໍ່ຮ່ວມມືສາມຝ່າຍ ກັບ ຄຄຊ ສສ.ຫວຽດນາມ ແລະ ສະຖານທູດລຸກຊໍາບວກ ແລະ ສຸມໃສ່ສືບຕໍ່ຄົ້ນຄວ້າການຮ່ວມມືກັບສາກົນ ແລະ ຍາດແຍ່ງການຊ່ວຍເຫຼືອຫຼາຍຮູບແບບ. ຄຽງຄູ່ກັນນັ້ນ, ກໍຈະຍົກສູງພາລະບົດບາດຂອງຕົນໃນເວທີສາກົນ ໂດຍການສືບຕໍ່ກະກຽມບັນດາເອກະສານຕ່າງໆ ແລະ ປັບປຸງບັນດານິຕິກໍາ ທີ່ຕິດພັນກັບການສະໝັກເຂົ້າເປັນສະມາຊິກສົມບູນຂອງ IOSCO.

### 6.2. ການກໍ່ສ້າງບຸກຄະລາກອນ

ສຄຄຊ ຈະສືບຕໍ່ຍາດແຍ່ງການຊ່ວຍເຫຼືອຈາກພາກພື້ນ ແລະ ສາກົນ ເພື່ອກໍ່ສ້າງບຸກຄະລາກອນທັງດ້ານຜູ້ຄຸ້ມຄອງ ແລະ ຜູ້ມີສ່ວນຮ່ວມໃນຕະຫລາດທຶນ ໃຫ້ມີຄວາມຮູ້ຄວາມສາມາດທີ່ກວ້າງຂວາງ ແລະ ທັນກັບສະພາບການຂອງຕະຫຼາດທຶນໂລກຫຼາຍຂຶ້ນ ດ້ວຍການນໍາສົ່ງບຸກຄະລາກອນໄປຖອດຖອນບົດຮຽນ ແລະ ເຂົ້າຮ່ວມຝຶກອົບຮົມຕ່າງໆ ທັງພາຍໃນ ແລະ ຕ່າງປະເທດ ເພື່ອນໍາບົດຮຽນມາໝູນໃຊ້ເຂົ້າໃນການພັດທະນາວຽກງານຕະຫຼາດທຶນຂອງ ສປປ ລາວ ໃຫ້ມີການພັດທະນາ ແລະ ທັນໄປສູ່ມາດຖານຂອງສາກົນເທື່ອລະກ້າວ.

# ເອກະສານຊ້ອນທ້າຍ

ແຜນວາດ 1: ການເໜັງຕີງລາຄາຮຸ້ນ EDL GEN, BCEL, LWPC, PTL, SVN, PCD, LCC, MHTL ແລະ LAT (1 ມັງກອນ ຫາ 26 ທັນວາ 2018)




ແຜນວາດ 2: ມູນຄ່າຕະຫຼາດຫຼັກຊັບທຽບກັບ GDP




ໝາຍເຫດ: ຂໍ້ມູນ GDP ແມ່ນອ້າງອີງຈາກຂໍ້ມູນຂອງ ທຫລ ແລະ GDP ທີ່ໃຊ້ສົມທຽບປີ 2018-19 ແມ່ນເປັນ GDP ປີ 2017

ແຜນວາດ 3: ສົມທຽບການເຄື່ອນໄຫວຂອງມູນຄ່າການຊື້-ຂາຍ ແລະ ດັດຊະນີຕະຫຼາດຫຼັກຊັບ




ແຜນວາດ 4: ຈໍານວນບັນຊີນັກລົງທຶນ



ຕາຕະລາງ 1: ສະຖິຕິກ່ຽວກັບການອອກຈຳໜ່າຍຫຼັກຊັບ ແຕ່ປີ 2010-2018

| ສະຖິຕິກ່ຽວກັບການອອກຈຳໜ່າຍຫຼັກຊັບ ແຕ່ປີ 2010-2018 | | | | | | | | ຫົວໜ່ວຍ: ຕື້ກີບ |
|---|---|---|---|---|---|---|---|---|
| **ຊື່ບໍລິສັດ** | **2010** | **2012** | **2013** | **2014** | **2015** | **2016** | **2017** | **2018** | **ລວມ** |
| **ພາຍໃນ** | | | | | | | | | |
| BCEL | 305,39 | | | | | | 360,06 | | 665,45 |
| EDL-GEN | 931,99 | 1.611,15 | | | 2.754,00 | | | | 5.297,14 |
| LWPC | | | 40,35 | | | | | | 40,35 |
| PTL | | | | 240,00 | | | | | 240,00 |
| SVN | | | | | 77,50 | | | | 77,50 |
| PCD | | | | | | | 98,20 | | 98,20 |
| LCC | | | | | | | | 28,80 | 28,80 |
| MTL | | | | | | | | 25,60 | 25,60 |
| LAT | | | | | | | | 14,00 | 14,00 |
| ລວມ (1) | **1.237,38** | **1.611,15** | **40,35** | **240,00** | **2.831,50** | **-** | **458,26** | **68,40** | **6.487,04** |
| **ຕ່າງປະເທດ** | | | | | | | | | |
| EDL-GEN | | | | 1.625,00 | | 2.558,40 | | 3.551,70 | 7.735,10 |
| NN2PC | | | | | | | 1.500,00 | 780,00 | 2.280,00 |
| ລວມ (2) | **-** | **-** | **-** | **1.625,00** | **-** | **2.558,40** | **1.500,00** | **4.331,70** | **10.015,10** |
| ລວມ (1)+(2) | **1.237,38** | **1.611,15** | **40,35** | **1.865,00** | **2.831,50** | **2.558,40** | **1.958,26** | **4.400,10** | **16.502,14** |
| ທຽບໃສ່ GDP ໃນປີ | **2,19%** | **2,22%** | **0,05%** | **1,75%** | **2,41%** | **1,98%** | **1,39%** | **2,89%** | **10,83% (ທຽບໃສ່ GDP ຂອງປີ 2018)** |

ຕາຕະລາງ 2: ຂໍ້ມູນບໍລິສັດຫຼັກຊັບ

| ລ/ດ | ເນື້ອໃນ | ປະເພດ | ໝາຍເຫດ |
|---|---|---|---|
| 1 | ບໍລິສັດຫຼັກຊັບ | ຄົບວົງຈອນ | ບໍລິສັດຫຼັກຊັບ ທຄຕລ–ກທ ຈໍາກັດ<br>ບໍລິສັດຫຼັກຊັບ ລ້ານຊ້າງ ມະຫາຊົນ<br>ບໍລິສັດຫຼັກຊັບ ລາວ–ຈີນ ຈໍາກັດ |
| | | ທີ່ປຶກສາທາງດ້ານການເງິນ | ບໍລິສັດຫຼັກຊັບ ເອພີເອັມລາວ ຈໍາກັດ |
| 2 | ບໍລິສັດກວດກວດສອບ | ກວດສອບບັນຊີ | Ernst & Young Lao. Co., Ltd,<br>Deloitte (Lao) Sole Company Limited<br>KPMG Lao Company Limited<br>PriceWaterHouseCoopers (Lao) Co., Ltd, |
| 3 | ບໍລິສັດຈັດອັນດັບຄວາມໜ້າເຊື່ອຖື | ຈັດອັນດັບຄວາມໜ້າເຊື່ອຖື | TRIS Rating Co., Ltd |
| 4 | ບໍລິສັດປະເມີນມູນຄ່າຊັບສິນ | ປະເມີນມູນຄ່າຊັບສິນ | ms Property Consultants Co., Ltd,<br>Sherman Appraisal (Lao) Company Limited.,<br>Assets Appraisal Co., Ltd, |
| 5 | ທະນາຄານດູແລຊັບສິນ | ດູແລຊັບສິນ | ທະຄານກຸງເທບ ຈໍາກັດ (ມະຫາຊົນ) ສາຂານະຄອນຫຼວງວຽງຈັນ.<br>ທະນາຄານ ອຸດສາຫະກໍາ–ການຄ້າ ແຫ່ງ ສປ ຈີນ ສາຂານະຄອນຫຼວງວຽງຈັນ.<br>ທະນາຄານ ແຫ່ງປະເທດຈີນ ຈໍາກັດ ສາຂານະຄອນຫຼວງ ວຽງຈັນ. |

ຕາຕະລາງ 3: ສັງລວມນິຕິກຳໃນຂົງເຂດວຽກງານຫຼັກຊັບ (ສຄຄຊ) ທີ່ຖືກຮັບຮອງ ແລະ ປະກາດໃຊ້ໃນປີ 2018

| ລ/ດ | ຊື່ນິຕິກຳ | ປະເພດນິຕິກຳ | ເລກທີ | ລົງວັນທີ |
|---|---|---|---|---|
| 1 | ຄຳແນະນຳກ່ຽວກັບ ຕົວຊີ້ບອກທຸລະກຳທີ່ສົ່ງໄສວ່າເປັນການຟອກເງິນ ຫຼື ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍຂອງ ບໍລິສັດຫຼັກຊັບ | ຄຳແນະນຳ | 0001/ສຄຄຊ | 02 ມີນາ 2018 |
| 2 | ຂໍ້ຕົກລົງວ່າດ້ວຍ ການກຳນົດລາຄາຮຸ້ນ ຂອງບໍລິສັດທີ່ມີຈຸດປະສົງອອກຈຳໜ່າຍຮຸ້ນ | ຂໍ້ຕົກລົງ | 02/ຄຄຊ | 09 ກຸມພາ 2018 |
| 3 | ແຈ້ງການເລື່ອງ ການລາຍງານ ແລະ ເປີດເຜີຍຂໍ້ມູນເອກະສານລາຍງານການເງິນຂອງບໍລິສັດຈົດທະບຽນ | ແຈ້ງການ | 0047/ສຄຄຊ | 30 ສິງຫາ 2018 |
| 4 | ຂໍ້ຕົກລົງວ່າດ້ວຍ ການກຳນົດລະຫັດຫຼັກຊັບຢູ່ ສປປ ລາວ | ຂໍ້ຕົກລົງ | 16/ຄຄຊ | 03 ກັນຍາ 2018 |
| 5 | ບົດແນະນຳວ່າດ້ວຍ ການກຳນົດລະຫັດຫຼັກຊັບ (ປັບປຸງ) | ບົດແນະນຳ | 347/ຕລຊລ | 03 ຕຸລາ 2018 |
| 6 | ຂໍ້ຕົກລົງວ່າດ້ວຍ ຕົວແທນຜູ້ຖືຮຸ້ນກູ້ | ຂໍ້ຕົກລົງ | 17/ຄຄຊ | 03 ກັນຍາ 2018 |
| 7 | ຂໍ້ຕົກລົງວ່າດ້ວຍ ການກຳນົດອັດຕາຄ່າທຳນຽມໃນ ຊື້-ຂາຍ ແລະ ການໂອນ ພັນທະບັດລັດຖະບານ ໃນຕະຫຼາດຫຼັກຊັບລາວ | ຂໍ້ຕົກລົງ | 21/ຄຄຊ | 17 ທັນວາ 2018 |
| 8 | ຄູ່ມືກ່ຽວກັບ ການນຳໃຊ້ຊ່ອງທາງການຮ້ອງຟ້ອງ ຫຼື ແຈ້ງຄວາມ ຈາກສັງຄົມ ຢູ່ໃນຂົງເຂດວຽກງານຫຼັກຊັບ | ຄູ່ມື | 0002/ສຄຄຊ | 07 ມີນາ 2018 |
| 9 | ແຈ້ງການເລື່ອງ ການລົບລ້າງບົດແນະນຳວ່າດ້ວຍລະຫັດຫຼັກຊັບ | ແຈ້ງການ | 006/ສຄຄຊ | 17 ຕຸລາ 2018 |

ໝາຍເຫດ: ລາຍລະອຽດກະລຸນາເບິ່ງເວບໄຊທ໌ **www.lsc.gov.la**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ສໍານັກງານ ຄະນະກໍາມະການຄຸ້ມຄອງຫຼັກຊັບ ເລກທີ ໐໓໕/ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 14 ມັງກອນ 2019

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບ

## ສ້າງບົດລາຍງານປະຈໍາປີ 2018 ຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ.

- ອີງຕາມທິດຊີ້ນໍາຈາກກອງປະຊຸມລວມກົມ ຄັ້ງວັນທີ 7 ມັງກອນ 2019.

**ຫົວໜ້າສໍານັກງານ ຄະນະກໍາມະການຄຸ້ມຄອງຫຼັກຊັບ ຕົກລົງ:**

**ມາດຕາ 1** ແຕ່ງຕັ້ງຄະນະຮັບຜິດຊອບກະກຽມສ້າງບົດລາຍງານປະຈໍາປີ 2018 ຂອງສໍານັກງານຄະນະກໍາມະການຄຸ້ມຄອງຫຼັກຊັບ. ປະກອບມີບັນດາທ່ານ ດັ່ງນີ້:

1. ທ່ານ ບຸນຈົງ ກອງຄໍາ ຫົວໜ້າຄະນະ;
2. ທ່ານ ປອ. ສຸດທິເດດ ບຸນລືໄຊ ຮອງຫົວໜ້າຄະນະ;
3. ທ່ານ ວິລະເດດ ທອງວັນຄໍາ ຄະນະ;
4. ທ່ານ ວັນນະສັກ ກອງວົງສາ ຄະນະ;
5. ທ່ານ ແສງອາລຸນ ວິໄລສານ ຄະນະ;
6. ທ່ານ ພູໄຮ ຫຼວງມຸນມິນທອນ ຄະນະ;
7. ທ່ານ ນາງ ສຸດສະດາ ຕົ່ນທອງໃສ ຄະນະ;
8. ທ່ານ ນາງ ພິມສະໄໝ ອິນທິປັນຍາ ຄະນະ;
9. ທ່ານ ແກ້ວປະເສີດ ຄໍາມີສີ ຄະນະ;
10. ທ່ານ ສອນໄຊ ວົງພິເດດ ຄະນະ;
11. ທ່ານ ວົງປະສິດ ແສງວົງເດືອນ ຄະນະ;
12. ທ່ານ ນາງ ອານຸດທິດາ ພິມສະຫວັດດີ ຄະນະ.

**ມາດຕາ 2** ມອບໃຫ້ຄະນະທີ່ຖືກແຕ່ງຕັ້ງແບ່ງຄວາມຮັບຜິດຊອບກັນລະອຽດ, ປະຕິບັດວຽກງານດ້ວຍຄວາມຮັບຜິດຊອບສູງ ເພື່ອກະກຽມກອງປະຊຸມດັ່ງກ່າວ ປະສົບຜົນສໍາເລັດຕາມເປົ້າໝາຍທີ່ວາງໄວ້, ພ້ອມທັງລາຍງານການປະຕິບັດວຽກງານໃຫ້ແກ່ ຄະນະ ສຄຄຊ ຮັບຊາບໃນແຕ່ລະໄລຍະ.

**ມາດຕາ 3** ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ຫົວໜ້າສໍານັກງານ ຄຄຊ

ສາຍສະໝອນ ຈັນທະຈັກ